VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ: 024 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 01 OCT 2021

ຮຽນ: ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ທ່ານຜູ້ອໍານວຍການໃຫຍ່ຕະຫຼາດຫຼັກຊັບລາວ

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງການກ່ຽວກັບການປິດບໍລິການຊື່ອຄາວໃນບາງຫ້ອໜ່ວຍທຸລະກິດທີ່ຂຶ້ນກັບບໍລິສັດ ວຽງຈັນ ເຊັ້ນເຕີ ລາວ ມະຫາຊົນ

- ອີງຕາມແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີກ່ຽວກັບການສືບຕໍ່ປະຕິບັດມາດຕາການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດ Covid 19 ໃນໄລຍະວັນທີ 1-15 ຕຸລາ 2021 ສະບັບເລກທີ 1260/ຫສນຍ ລົງວັນທີ 30 ກັນຍາ 2021.

ເນື່ອງຈາກໃນປະຈຸບັນນີ້ ສະພາບການແຜ່ລະບາດຂອງ Covid 19 ຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເໜື່ອງໃນນະຄອນຫຼວງ ເພື່ອຮັກສາຄວາມປອດໄພຂອງບັນລຸກຄ້າ ແລະ ພະນັກງານ, ຜູ້ອໍານວຍການໃຫຍ່ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນໄດ້ຕົກລົງ:

1. ເຫັນດີໃຫ້ເຂດສູນການຄ້າສືບຕໍ່ຢຸດໃຫ້ບໍລິການຊື່ອຄາວໃນໄລຍະວັນທີ 1-15 ຕຸລາ 2021, ນອກຈາກຮ້ານທີ່ຕິດກັບຖະໜົນບາງແຫ່ງທີ່ທາງລັດຖະບານເຫັນດີໃຫ້ສືບຕໍ່ດໍາເນີນທຸລະກິດ.

2. ສໍາລັບເຂດຕຶກຫ້ອງການ, ແມ່ນເປີດບໍລິການປົກກະຕິໃຫ້ບັນດາບໍລິສັດທີ່ໄດ້ຕັ້ງສໍານັກງານຢູ່ໃນອາຄານຫ້ອງການ, ເພື່ອສະກັດກັ້ນການລະບາດ ໄດ້ຈັດຫ້ອງສະເພາະເພື່ອຕອນຮັບແຂກ ແລະ ບໍ່ອະນຸມັດແຂກພາຍນອກຂຶ້ນໄປຫ້ອງການໃນແຕ່ລະຊັ້ນ, ມີການກວດເທົ່າອຸນຫະພູມຮ່າງກາຍ ການໃສ່ຜ້າອັດປາກ ແລະ ດັ່ງ ຂອງຄົນເຂົ້າ-ອອກ, ສະໜອງແຈ່ວນ້ໍາຢ້າຂ້າເຊື້ອໃຫ້ໃຊ້ຟຣີ, ເພີ່ມທະວີການສີດພົ້ນນ້ໍາຢ້າຂ້າເຊື້ອໃນໂຊນສາທາລະນະ. ພ້ອມດຽວກັນນັ້ນ ຍັງມີການປັບປຸງເຕີ່ມອີກ ໂດຍປະຕິບັດຕາມມາດຕະການສະກັດກັ້ນ ແລະ ຄວບຄຸມພະຍາດໂຄວິດ 19 ຂອງທາງລັດຖະບານ.

ຜູ້ອໍານວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company